# ການອອກແບບບົດວິໄຈ ທາງກົດໝາຍທີ່ດີ

By Perrine SIMON

uni.lu
UNIVERSITÉ DU LUXEMBOURG

# ການອອກແບບບົດວິໄຈທາງ(ກົດໝາຍ) ແມ່ນຫຍັງ?

ການອອກແບບບົດວິໄຈ ແມ່ນແຜນການ ຫຼື

ຂະບວນການທົ່ວໄປຂອງການວິໄຈ

ເພື່ອສຶກສາກ່ຽວກັບຄຳຖາມສະເພາະໃດໜຶ່ງທີ່ຈະ

ໄດ້ຮັບການຄົ້ນຄວ້າຢູ່ໃນບົດວິໄຈດັ່ງກ່າວ

# ຂະບວນການວິໄຈ I

1. ການເລືອກເອົາຫົວຂໍ້ການວິໄຈ
2. ການກຳນົດບັນຫາການວິໄຈ
3. ການທົບທວນທິດສະດີທີ່ກ່ຽວຂ້ອງກັບການວິໄຈ
4. ການກະກຽມຕັ້ງຄຳຖາມການວິໄຈ
5. ການເລືອກວິທີການວິໄຈ (qualitative/ Law in the books – black letter: descriptive; analytical; normative)

# ຂະບວນການວິໄຈ II

6. ການຮວບຮວມຂໍ້ມູນການວິໄຈ (ແຫຼ່ງຂໍ້ມູນຕົ້ນຕໍ ແລະ ແຫຼ່ງຂໍ້ມູນສຳຮອງທາງດ້ານກົດໝາຍ)

7. ການວິເຄາະຂໍ້ມູນການວິໄຈທີ່ໄດ້ຮວບຮວມ

8. ການແປ ຫຼື ຕີຄວາມຂໍ້ມູນການວິໄຈ

9. ການຂຽນບົດວິໄຈ (ບົດຄວາມ, ບົດວິທະຍານິພົນ, ບົດລາຍງານ)

# ຂະບວນການວິໄຈ III

10. ການໃສ່ຄຳອະທິບາຍທາງລຸ່ມ Footnote, ອັກສອນຫຍໍ້, ການອ້າງອີງ

11. ບັນນານຸກົມ/ເອກະສານຊ້ອນທ້າຍກົດໝາຍ ຫຼື ບົດລາຍງານ

(12. ດັດຊະນີຂອງຜູ້ຂຽນ)

# TIMELINE

## RESEARCH PROCESS I

Pre-research : finding a good legal research topic, literature review and formulation the research question and sub-research questions

## RESEARCH PROCESS II

In-depth research: a lot of reading, thinking and writing

## RESEARCH PROCESS III

Finalisation of the research: checking footnotes, citations and preparing the bibliography

# ບັນຫາ
# ການອິໃຈ/ຫົວຂໍ້

# ບັນຫາການວິໄຈ

- **ການລະບຸ**ບັນຫາການວິໄຈທີ່ຈະແຈ້ງ
- ***ການອ້າງເຫດຜົນ*** *ໃນການເລືອກບັນຫາການວິໄຈນັ້ນ*
  - *ໂດຍສະເພາະບັນຫາອື່ນໆເຊິ່ງເປັນທາງເລືອກທີ່ສາມາດນຳມາຄົ້ນຄວ້າໄດ້*
- ຕົວຢ່າງ:
  - *ບົດຄົ້ນຄວ້າປະລິນຍາເອກຂອງຂ້ອຍ: ອຳນາດທາງອາຍາຂອງສະຫະພາບເອີຣົບ (the criminalisation power of the European Union)*

# ການເລືອກຫົວຂໍ້/ການວິໃຈ ‘ບັນຫາ’

1. ເລືອກໃນສາຂາທີ່ທ່ານສົນໃຈ
2. ເລືອກໃນສາຂາທີ່ທ່ານສະດວກສະບາຍ
3. ເລືອກໃນສາຂາທີ່ທ່ານຮູ້

# ກຳນົດບັນຫາ

1. ທ່ານຄິດວ່າແມ່ນຫຍັງທີ່ຈຳເປັນຕ້ອງເອົາມາຄົ້ນຄວ້າວິໄຈ?
2. ທ່ານຢາກຈະເຂົ້າໃຈຫຍັງໃຫ້ຫຼາຍຂຶ້ນ?
3. ທ່ານຢາກຈະອະທິບາຍຫຍັງ?
4. ທ່ານຢາກຈະແກ້ໄຂ/ປັບປຸງ/ສະເໜີຫຍັງ?

ຫົວຂໍ້ກົດໝາຍໃດສາມາດເປັນທີ່ໜ້າສົນໃຈຢູ່ໃນລາວ?

ຫົວຂໍ້ໃດທີ່ອາດຈະບໍ່ເໝາະສົມທີ່ຈະເຮັດການວິໃຈຢູ່ໃນລາວ?

# ການທົບທວນ ເອກະສານ

# ການທົບທວນເອກະສານ

- ທົບທວນເອກະສານທີ່ຖືກຕີພິມເຜີຍແຜ່ມາກ່ອນ ເຊິ່ງກ່ຽວຂ້ອງກັບບັນຫາທີ່ທ່ານຄົ້ນຄວ້າ
- ນັກຂຽນຄົນອື່ນໄດ້ຕີພິມເຜີຍແຜ່ກ່ຽວກັບບັນຫາໃນຂົງເຂດນີ້ມາກ່ອນບໍ່?
- ບົດວິໄຈຂອງທ່ານມີຫຍັງທີ່ຈະຕ້ອງໄດ້ເພີ່ມເຕີມບໍ່?
- ຄຸນຄ່າເພີ່ມຈາກບົດວິໄຈຂອງທ່ານນີ້ແມ່ນຫຍັງ?
    - ➢ *ທ່ານຈະເຂົ້າເຖິງບັນຫາໂດຍວິທີການສຶກສາໃນຫຼາກຫຼາຍແງ່ມຸມ ຫຼື ບໍ່?*

- ທ່ານຄວນອະທິບາຍວ່າເປັນຫຍັງບົດວິໄຈຂອງທ່ານຈະຊ່ວຍສົ່ງເສີມ ຫຼື ເປັນອົງປະກອບເຮັດໃຫ້ບົດວິໄຈທົ່ວຂໍ້ທີ່ມີຢູ່ນັ້ນສົມບູນຂຶ້ນໄດ້ແນວໃດ; ແລະ
- ເປັນຫຍັງ ບົດວິໃຈໃໝ່ໃນຂົງເຂດນີ້ມີຄວາມຈຳເປັນ ແລະ ມັນມີຄວາມຈຳເປັນແນວໃດ? ຕົວຢ່າງ: ເພາະບົດວິໄຈສະບັບເກົ່ານັ້ນມັນລ່າສະໄໝໄປແລ້ວ

# ການຕັ້ງຄຳຖາມການວິໄຈ

# ການກຳນົດຄຳຖາມ

ການກຳນົດຄຳຖາມນີ້ແມ່ນພາກສ່ວນທີ່ສຳຄັນທີ່ສຸດ. ທ່ານຈະຕ້ອງມີຄຳຖາມເຫຼົ່ານີ້ໄວ້ໃນຫົວຕະຫຼອດເວລາ.

# ຄຳຖາມການວິໄຈ

- ຕັ້ງສົມມຸດຖານ ແລະ ຄຳຖາມການວິໄຈທີ່ເປັນສູນລວມຂອງບັນຫາໃນບົດວິໄຈ ຢ່າງຊັດເຈນ ແລະ ຈະແຈ້ງ
- ຄວນຄຳນຶງວ່າຄຳຖາມການວິໄຈນີ້ເປັນ ‘ເນື້ອໃນຫຼັກ’ ຂອງບົດວິໄຈທັງໝົດຂອງທ່ານ (ບົດຄວາມ, ບົດວິທະຍານິພົນ, ບົດລາຍງານ)
- ຄຳນຶງວ່າທ່ານຄວນທີ່ຈະສາມາດຕອບຄຳຖາມຂອງການວິໄຈບໍ່ວ່າຈະໃນທາງບວກ ຫຼື ທາງລົບ
- ດັ່ງນັ້ນ, ທ່ານຄວນທີ່ຈະພະຍາຍາມຈັດໂຄງຮ່າງ ບົດທີ/ພາກທີ ຂອງບົດຄວາມ/ບົດວິທະຍານິພົນຂອງທ່ານໃຫ້ມີຄວາມສອດຄ່ອງກັບຄຳຖາມຂອງການວິໄຈນັ້ນ

# THE RED THREAD




UNROLL THE RED THREAD DURING YOUR WHOLE RESEARCH

# ຍົກຕົວຢ່າງຄຳຖາມການວິໄຈຂອງທ່ານເອງ

- ຄຳຖາມການວິໄຈໂດຍລວມຢູ່ໃນບົດວິໄຈຂອງທ່ານແມ່ນຫຍັງ?
- ທ່ານມີຫຼາຍກວ່າໜຶ່ງຄຳຖາມ ຫຼື ບໍ?
- ທ່ານສາມາດລວມຄຳຖາມໃນທຸກຂັ້ນຕອນການວິໄຈ ຫຼື ບໍ?

# ການຕັ້ງສົມມຸດຖານ

# ການຕັ້ງສົມມຸດຖານ

- ການຄາດຄະເນຜົນໄດ້ຮັບຂອງທ່ານແມ່ນຫຍັງ?
- ທ່ານມີຄຳຕອບໃນຫົວແລ້ວ ຫຼື ບໍ?
- ທ່ານຄິດວ່າທ່ານສາມາດພິສູດຂໍ້ສົມມຸດຖານຂອງທ່ານໄດ້ ຫຼື ບໍ?

# ສະຫຼຸບ

1. ເລືອກເອົາຫົວຂໍ້ທີ່ທ່ານສົນໃຈ
2. ຕັ້ງ 'ບັນຫາ' ການວິໄຈຂອງທ່ານ
3. ຕັ້ງຄໍາຖາມການວິໄຈຂອງທ່ານ
4. ຕັ້ງຂໍ້ສົມມຸດຖານ: ການຄາດຄະເນຂອງທ່ານ

# ເລີ່ມການວິໃຈ

- ວິເຄາະຂໍ້ມູນທີ່ທ່ານໄດ້ຮວບຮວມມາ
- ເລີ່ມຕອບຄໍາຖາມຂອງທ່ານ
- ຢືນຢັນ/ຄັດຄ້ານຂໍ້ສົມມຸດຖານຂອງທ່ານດ້ວຍຂໍ້ໂຕ້ແຍ່ງ

# ຂອບໃຈສຳລັບການຮັບຟັງ!

For any questions, you can contact me at:

perrine.simon@ext.uni.lu

uni.lu

UNIVERSITÉ DU LUXEMBOURG

uni.lu UNIVERSITÉ DU LUXEMBOURG




Visit our website and follow our activities !

https://cooperationlaos.uni.lu/

UNIVERSITÉ DU LUXEMBOURG